ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກອ້ອຍ



ຂຽນໂດຍ: ອາຈານ ເກດ

ຂໍ້ມູນຈາກ: ບ້ານທ້ອມ ເມືອງ ຫາດຊາຍຟອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກອ້ອຍ

(ສະບັບທົດລອງ)

ຮີບໂຮມແລະຈັດໜ້າໂດຍ: ນາງ ຈັນທະຈອນ ຊຸມພົນພັກດີ

ແຕ້ມໂດຍ: ທ້າວ ສິດປະກອນ ທົງອາມາດ

ຮຽບຮຽງໂດຍ: ອ ຈ ໂພໄຊຈັນທະວົງສ

ອ.ຈ ເກດມະນີ ບັນດາລັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການສູນອົບຮົມຮ່ວມພັດທະນາ.

ປື້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປື້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## + ຄວາມເປັນມາຂອງການປູກອ້ອຍ

ປະເທດລາວເຮົາເປັນແຫຼ່ງອຸດົມສົມບູນໄປດ້ວຍຊັບໃນດິນ ສິນໃນນໍ້າ, ມີພືດພັນນາໆຊະນິດ ແລະການປູກຝັງຂອງຊາວໄຮ່ຊາວນາ ມີຫຼາຍສິ່ງຫຼາຍຢ່າງເຊັ່ນ: ປູກຜັກ ການປູກອ້ອຍເປັນຕົ້ນວັດຖຸດິບທີ່ມີຄຸນຄ່າທາງອາຫານ ແລະຍັງເປັນເສດຖະກິດສົ່ງເຂົ້າໂຮງ ງານເພື່ອຜະລິດເປັນນໍ້າຕານ, ເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ, ຖ້າປູກອ້ອຍກໍຈະໃຊ້ເປັນຂອງຝາກໃຫ້ກັນແລະກັນ ແລະ ອ້ອຍນີ້ຍັງໃຊ້ເຂົ້າເປັນເຄື່ອງສັງຄະທານ ໃນງານບຸນຫຼາຍຢ່າງເຊັ່ນ: ງານບຸນເຂົ້າປະດັບດິນ ແລະ ອື່ນໆນອກຈາກນັ້ນຍັງເຮັດນໍ້າອ້ອຍໄດ້ອີກເມື່ອແຂກຕ່າງດ້າວຊາວຕ່າງເມືອງມາຊົມປະເທດລາວເມື່ອເພິ່ນກິນເຂົ້າຫຼາມ, ປີ້ງໄກ່ ເພິ່ນຕ້ອງບໍ່ລືມໄປດື່ມນໍ້າອ້ອຍ ແລ້ວ ເພິ່ນຕ່າງຍ້ອງວ່າ ຫອມ, ຫວານແຊບດີເຊິ່ງໃນນີ້ເອີ້ນວ່າອ້ອຍເປັນອາຫານເອກກະລັກຂອງຊາດລາວທີ່ມາແຕ່ດົນນານແລ້ວ.

PDF created with pdfFactory Pro trial version www.pdffactory.com

+ **<u>ການປູກອ້ອຍ:</u>**

- ກ່ອນອື່ນໝົດແມ່ນເຮົາຕ້ອງມີການກະກຽມຫ້າງຫາແນວອ້ອຍໄວ້



- ກະກຽມດິນສວນ, ເພື່ອກຽມໄຖ, ຄາດ



PDF created with pdfFactory Pro trial version www.pdffactory.com

- ໄຖເປັນຮ່ອງເພື່ອທຳການປູກ



- ຕັດແນວອ້ອຍທີ່ເຮົາຫ້າງຫາໄວ້



PDF created with pdfFactory Pro trial version www.pdffactory.com

- ຕັດເປັນທ່ອນເພື່ອຈະນຳໄປປູກ



- ກ່ອນຈະນຳໄປປູກເຮົາຄວນຕັດແຊ່ນ້ຳໄວ້ 1 ຄືນ



PDF created with pdfFactory Pro trial version www.pdffactory.com

+ <u>ໄລຍະຫ້າງການປູກ</u>

- ໄລຍະຫ້າງຂອງຫຼືວ່າ ຮ່ອງປະມານ 1, 2 ແມັດ



- ໄລຍະຫ່າງຂອງການປູກແຕ່ລະຄູຫ່າງກັນປະມານ 20-25 ຊັງຕິແມັດ



PDF created with pdfFactory Pro trial version www.pdffactory.com

- ການປູກແມ່ນເຮົາວາງຕາໃຫ້ມັນຢູ່ທັງສອງຂ້າງແລ້ວເອົາດິນຖົມໜາ ປະມານ 3-5 ຊັງຕີແມັດ



+ **ການດູແລຮັກສາອ້ອຍ**

- ຜ່ານໄລຍະການປູກມາປະມານ2-3 ເດືອນ ເຮົາຄຸນຈະໃສ່ຝຸ່ນແລ້ວ ຖົມຮ່ອງເພື່ອຂ້າຫຍ້າໃນວ່າງອ້ອຍ
- ຜ່ານໄລຍະໃສ່ຝຸ່ນປະມານ 2-3 ເດືອນເບື້ອງຕົ້ນເຮົາກໍເລີ່ມແກະ ກາບແລ້ວຄູນດິນຂຶ້ນເພື່ອເຮັດເປັນຄູເພື່ອປ້ອງກັນບໍ່ໃຫ້ອ້ອຍລົ້ມ ແລ້ວປະໄວ້ໃນລໄລຍະໜຶ່ງແລ້ວເຮົາໜັ້ນແກະກາບໄປເລື້ອຍໆຈົນ ກວ່າຮອດໄລຍະ 8 ເດືອນແມ່ນຮອດໄລຍະເກັບຜົນຜະລິດ
- ການປູກອ້ອຍແມ່ນສາມາດປັກໄດ້ສອລລະດູຄື: ລະດູແລງ ແລະ ລະດູຝົນ

PDF created with pdfFactory Pro trial version www.pdffactory.com

+ **<u>ຄຸນປະໂຫຍດຂອງການປູກອ້ອຍ</u>**

- ເຮັດນໍ້າຕານ
- ເປັນອາຫານຫວ່າງ
- ກາບແລະຍ້ອດເປັນອາຫານສັດ
- ຜະລິດເປັນສິນຄ້າໄດ້ຕະຫຼອດປີ

## ກາບ: ການປູກອ້ອຍ

| | |
|---|---|
| ຖິ່ນຖານຂ້ອຍ | ປູກອ້ອຍເຫຼືອຫຼາຍ |
| ປູກຢັ່ງຢາຍ | ແຕ່ເໜືອຮອດໃຕ້ |
| ໃຜມາກາຍ | ທຸກຄືນກໍເຫັນ |
| ປູກອ້ອຍເປັນ | ຕຳນານແຕ່ກ່ອນ |
| ໜ້າອອນຊອນ | ຍາມຄອນໄປຂາຍ |

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ປູກອ້ອຍ

| | |
|---|---|
| ເຮົາມາເຮົາມາ | ມາພວກເຮົາມາ |
| ພໍ່ແມ່ນລຸງຕາ | ຫັນມາພີ້ກ່ອນ |
| ຢ່າຟ້າວຫຼັບນອນ | ຟັງກ່ອນຈະກ່າວ |
| ຄືມີເລື່ອງລາວ | ໃນການປູກອ້ອຍ |
| ມັນເປັນການຊ່ອຍ | ຖານະຄອບຄົວ |
| ປູກໄວ້ໃຫ້ທົ່ວ | ທ້ອງຖິ່ນດິນນາ |
| ບາດໃຫຍ່ຂຶ້ນມາ | ຕັດຂາຍທຸກເມື່ອ |
| ນີ້ເວົ້າໃຫ້ເຊື່ອ | ໝາກຜົນຂອງມັນ |
| ອ້ອຍມັນສຳຄັນ | ເຮັດຫຍັງກໍໄດ້ |
| ຈະເອົາໄປໃຊ້ | ເຂົ້າໃນໂຮງງານ |
| ຜະລິດນ້ຳຕານ | ອອກມາໄໝໆ |
| ໃຜໆກໍໃຊ້ | ເອົາໄວ້ແຕ່ງກິນ |

## ເພງ: ປູກອ້ອຍ

| | |
|---|---|
| ປູກອ້ອຍ | ປູກອ້ອຍ |
| ອ້ອຍພໍ່ຂ້ອຍ | ມີອ້ອຍດຳອ້ອຍແດງ |
| ປູກເປັນແປງ | ມີອ້ອຍແຂງໄວ້ອື້ວ |
| ຍາມເຮົາຫິ້ວ | ອື້ວນ້ຳອ້ອຍກິນ (ຊ້ຳ) |

PDF created with pdfFactory Pro trial version www.pdffactory.com

## ລຳຕັ່ງຫວາຍ: ການປູກອ້ອຍ

ໂອນໍ ພໍແຕ່ຫຼຽວ ເບິ່ງທົ່ງນາ
ກັບມາເຫັນປ່າອ້ອຍ ຊຽວງາມເຮັດເປັນເວີ່ນ
ອີ່ຫຼືເດີຄົນງາມເດີ ໂອຄົນງາມນາ
ຍອກ ຍອກ ຍອກ ຍອກ
ໂອນໍ ອັນວ່າອ້ອຍ ມີຄວາມສຳຄັນ
ທຸກຊັ້ນຄົນມັກກິນ ເພື່ອເພີ່ມນຳຕານ
ໃຫ້ການຈະເລີນເຕີບໃຫຍ່ ຂອງຄົນເຮົາໝາ
ຍອກ ຍອກ ຍອກ ຍອກ

PDF created with pdfFactory Pro trial version www.pdffactory.com

# <u>ຮູບແລະປະຫວັດຂອງຜູ້ຂຽນ</u>



ຊື່ ທ້າວ ເກດ

ນາມສະກຸນ ພົມມະຫາໄຊ

ອາຍຸ 34 ປີ

ອາຊີບ ເຮັດນາ

# <u>ເປັນຫຍັງຈິ່ງຢາກຂຽນຫົວຂໍ້ນີ້</u>

ຍ້ອນຢາກໃຫ້ຄົນຮຸ່ນນ້ອຍເຍົາວະຊົນໃຫ້ສືບທອດຕໍ່ໆໄປເພື່ອ ຮັກສາມູນເຊື້ອໃນການປູກອ້ອຍໃຫ້ຄົງຢູ່ໃນທ້ອງຖິ່ນບໍ່ໃຫ້ດັບສູນ

PDF created with pdfFactory Pro trial version www.pdffactory.com